> ສຳລັບຄູຊັ້ນປະຖົມສຶກສາ
> ສຳລັບຜູ້ອຳນວຍການໂຮງຮຽນຊັ້ນປະຖົມສຶກສາ
> ສຳລັບຄູຝຶກຫຼັກແຫຼ່ງ ແລະ ຄູຝຶກຂັ້ນແຂວງ
> ສຳລັບຜູ້ເຮັດວຽກສຶກສານິເທດ

# ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ

## ການສະໜັບສະໜູນຄູໃນການພັດທະນາຄວາມຮູ້ ແລະ ທັກສະສຳລັບ ການສອນຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່







ບາງຮູບພາບໄດ້ຖືກຖ່າຍກ່ອນມີການແນະນຳໃຫ້ໃສ່ຜ້າປິດປາກ
ຍ້ອນການລະບາດຂອງພະຍາດໂຄວິດ-19

# ການຮຽນ ແລະ ຜົນການຮຽນຂອງນັກຮຽນ ແມ່ນເປັນໝາກຫົວໃຈຂອງວຽກງານການພັດທະນາວິຊາຊີບຄູແບບຕໍ່ເນື່ອງ

ຄູຊັ້ນປະຖົມສຶກສາ, ຜູ້ອຳນວຍການໂຮງຮຽນ, ຜູ້ເຮັດວຽກສຶກສານິເທດ ຫຼື ຄູຝຶກ ມີບົດບາດສຳຄັນໃນການຈັດຕັ້ງປະຕິບັດ ຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່ ແລະ ຕໍ່ຜົນການຮຽນຂອງນັກຮຽນ.

ໃນຄວາມເປັນຈິງແລ້ວ, ການຄົ້ນຄວ້າວຽກງານການສຶກສາໄດ້ສະແດງໃຫ້ເຫັນວ່າ ຄຸນນະພາບການສອນ ແລະ ພາວະຄວາມເປັນຜູ້ນຳໃນໂຮງຮຽນແມ່ນປັດໄຈສຳຄັນໃນການປັບປຸງຜົນການຮຽນຂອງນັກຮຽນ.

ສະນັ້ນ, ເພື່ອໃຫ້ຄູ ແລະ ຜູ້ນຳດ້ານການສຶກສາ ສາມາດປະຕິບັດໜ້າທີ່ໄດ້ຢ່າງມີປະສິດທິພາບສູງສຸດນັ້ນ ພວກເຂົາຕ້ອງສືບຕໍ່ຂະຫຍາຍຄວາມຮູ້ ແລະ ທັກສະຂອງຕົນຢ່າງບໍ່ຢຸດຢັ້ງ.

ຄູຊັ້ນປະຖົມສຶກສາ ຕ້ອງມີສ່ວນຮ່ວມເຂົ້າໃນກິດຈະກຳຕ່າງໆຂອງການຮຽນແບບຕໍ່ເນື່ອງຕະຫຼອດສົກຮຽນເພື່ອສືບຕໍ່ພັດທະນາຄວາມໝັ້ນໃຈ ແລະ ທັກສະການສອນຂອງຕົນໃນການນຳໃຊ້ຫຼັກສູດຢ່າງມີປະສິດທິພາບ.

ຄູທຸກຄົນຕ້ອງການການສະໜັບສະໜູນແບບຕໍ່ເນື່ອງໃນການນຳໃຊ້ຫຼັກສູດໃໝ່ຕະຫຼອດສົກຮຽນ.

ເຄື່ອງມືໄດ້ມີການພັດທະນາເປັນຈຳນວນຫຼາຍ ເພື່ອສະໜັບສະໜູນຄູໃນໂຮງຮຽນ ແລະ ໃນຂັ້ນທ້ອງຖິ່ນເພື່ອນຳໃຊ້ເຂົ້າໃນຫ້ອງຮຽນຕາມຫຼັກສູດໃໝ່.

ເຄື່ອງມືເຫຼົ່ານີ້ຖືກພັດທະນາຂຶ້ນໂດຍມີຈຸດປະສົງໃຫ້ຄູ ແລະ ພະນັກງານທີ່ສະໜັບສະໜູນຄູໄດ້ນຳໃຊ້ເຊັ່ນ: ຜູ້ອຳນວຍການໂຮງຮຽນ, ຜູ້ເຮັດວຽກສຶກສານິເທດ, ຄູຝຶກຂັ້ນແຂວງ ແລະ ຜູ້ທີ່ກ່ຽວຂ້ອງອື່ນໆຕາມຄວາມເໝາະສົມ.





## ຄູສາມາດຂໍການສະໜັບສະໜູນໄດ້ຈາກໃຜ?

- ຜູ້ອຳນວຍການໂຮງຮຽນຂອງທ່ານ
- ສ່ຽວຂອງທ່ານໃນລະບົບການຜູກສ່ຽວ
- ຜູ້ເຮັດວຽກສຶກສານິເທດ
- ຄູ ຂັ້ນ ປ.1, ປ.2, ປ.3 ແລະ ປ.4 ຜູ້ທີ່ເຄີຍນຳໃຊ້ຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່
- ຄູທ່ານອື່ນໆ ຈາກໂຮງຮຽນຂອງທ່ານ
- ຄູຝຶກຂັ້ນແຂວງ
- ກຸ່ມໂຮງຮຽນ
- ຮອບວຽນຂອງການຮຽນ
- ກຸ່ມຮຽນຜ່ານວ໋ອດແອັບຂອງທ່ານ
- ຄູຊັ້ນປະຖົມສຶກສາທ່ານອື່ນໆໃນເມືອງຂອງທ່ານ

## ມີສື່ອຸປະກອນຫຍັງແດ່ທີ່ມີສຳລັບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ?

- ປຶ້ມຄູ່ມືຝຶກອົບຮົມສຳລັບນັກສຳມະນາກອນ
- ເຄື່ອງມືໃຫ້ການຊ່ວຍເຫຼືອໃນພາກຮຽນ
- ຮ່າງການວາງແຜນການສອນ ແລະ ຄຳແນະນຳ
- ວິດີໂອສຳລັບການພັດທະນາຄູ
- ຊຸດຟາຍການສອນສຽງ
- ປຶ້ມແບບຮຽນ
- ປຶ້ມຄູ່ມືຄູ

ຖ້າຫາກທ່ານບໍ່ມີ ຫຼື ບໍ່ຮູ້ວິທີເຂົ້າເຖິງສື່ເຫຼົ່ານີ້ ໃຫ້ລົມກັບຜູ້ອຳນວຍການໂຮງຮຽນ, ຜູ້ເຮັດວຽກສຶກສານິເທດ ຫຼື ພະນັກງານຫ້ອງການສຶກສາທິການ ແລະ ກິລາ ເມືອງຂອງທ່ານ.

# ເຄື່ອງມືໃຫ້ການຊ່ວຍເຫຼືອໃນພາກຮຽນ

5 ວິທີການ ພ້ອມດ້ວຍເຄື່ອງມືໃນການພັດທະນາວິຊາຊີບແບບຕໍ່ເນື່ອງທີ່ຄູສາມາດນໍາໃຊ້ມີດັ່ງນີ້:



**ການສັງເກດການສອນຂອງຄູໃນຫ້ອງຮຽນໂດຍຜູ້ອໍານວຍການ ຫຼື ຜູ້ເຮັດວຽກສຶກສານິເທດ**

ການສັງເກດການສອນໃນຫ້ອງຮຽນນີ້ ຈະຊ່ວຍໃຫ້ທ່ານ:

- ໄດ້ຮັບຄໍາຄິດເຫັນໃນທາງສ້າງສັນ
- ປັບປຸງຄຸນນະພາບການສອນ
- ເນັ້ນໃສ່ຂົງເຂດສໍາຄັນບ່ອນທີ່ຕ້ອງການການສະໜັບສະໜູນ
- ລະບຸວິທີການຕ່າງໆເພື່ອແກ້ໄຂບັນຫາການສອນທີ່ທ້າທາຍ




**ຂຽນກິດຈະກໍາການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ທີ່ທ່ານໄດ້ຝຶກ ຫຼື ຕ້ອງການທົດລອງໃຊ້ໃສ່ບ່ອນນີ້:**

_______________________________________________

_______________________________________________

_______________________________________________

_______________________________________________

_______________________________________________

_______________________________________________

_______________________________________________

_______________________________________________

_______________________________________________



**ຄູ, ຜູ້ອໍານວຍການ, ຜູ້ເຮັດວຽກສຶກສານິເທດ ແມ່ນຢູ່ໃນກຸ່ມວ໋ອດແອັບ ທີ່ທ່ານສາມາດຮຽນຮູ້, ຂໍຄວາມຊ່ວຍເຫຼືອ ແລະ ຖາມຄໍາຖາມ**

ໃນກຸ່ມວ໋ອດແອັບນີ້ ຈະຊ່ວຍໃຫ້ທ່ານ:

- ແກ້ໄຂສິ່ງທ້າທາຍໃນການຈັດຕັ້ງປະຕິບັດຫຼັກສູດສະບັບປັບປຸງໃໝ່
- ຖາມຄໍາຖາມທີ່ທ່ານມີກ່ຽວກັບຫຼັກສູດສະບັບປັບປຸງໃໝ່
- ແບ່ງປັນເລື່ອງລາວທີ່ປະສົບຜົນສໍາເລັດນໍາເພື່ອນຮ່ວມງານຂອງທ່ານ
- ຊອກຮູ້ວ່າຄູທ່ານອື່ນ ໄດ້ເຮັດຫຍັງແດ່ໃນຫ້ອງຮຽນຂອງພວກເຂົາ

**2** ການສອນ ເປັນທີມ

ຫ້ອງໂຄດ
ຖິງເຄື່ອງມື

**3** ຮອບວຽນຂອງ ການຮຽນ

**4** ລະບົບຈັບຄູ່/ ແບບຜູກສ່ຽວ



**ການກະກຽມ ແລະ ການສິ່ງຄວາມຮູ້ ໂດຍຄູສອງຄົນ**

ການສອນເປັນທີມນີ້ ຈະຊ່ວຍໃຫ້ທ່ານ:

- ຄົ້ນພົບກິດຈະກຳໃໝ່ໆເພື່ອນຳໃຊ້ໃນຫ້ອງຮຽນ
- ແກ້ໄຂບັນຫາການສອນທີ່ທ້າທາຍ
- ຮຽນຮູ້ຈາກຄູທ່ານອື່ນທີ່ມາສອນຮ່ວມ
- ສັງເກດ ແລະ ສາທິດເຕັກນິກການສອນແບບໃໝ່ ແລະ ການຈັດກິດຈະກຳຕ່າງໆ
- ເປັນວິທີທີ່ດີທີ່ສຸດສຳລັບຄູຈົບໃໝ່ ທີ່ຈະໄດ້ຮັບການຊ່ວຍເຫຼືອ “ໃນຂະນະທີ່ສອນ”

*ມີເຕັກນິກການສອນແບບເປັນທີມຫຼາຍເຕັກນິກ ທີ່ທ່ານສາມາດເຂົ້າເບິ່ງໄດ້ຕາມຄວາມຕ້ອງການຂອງທ່ານ.*



**ປະຊຸມກຸ່ມເປັນປະຈຳ ເຊິ່ງໃນກຸ່ມໜຶ່ງແມ່ນມີຄູປະມານ 3-12 ທ່ານ ເພື່ອສະໜັບສະໜູນເຊິ່ງກັນ ແລະ ກັນ - ຫົວຂໍ້ການປະຊຸມແມ່ນອີງໃສ່ຄວາມຕ້ອງການການຮຽນຂອງບັນດາຄູ**

ຮອບວຽນຂອງການຮຽນນີ້ ຈະຊ່ວຍໃຫ້ທ່ານ:

- ສະທ້ອນຄືນການສອນຂອງທ່ານ
- ແບ່ງປັນປະສົບການການສອນທີ່ປະຕິບັດໄດ້ດີ ແລະ ສິ່ງທ້າທາຍ
- ແກ້ໄຂບັນຫາທີ່ຫຍຸ້ງຍາກຮ່ວມກັນ
- ຮຽນຮູ້ແນວຄວາມຄິດໃໝ່ໆ ແລະ ເຕັກນິກການສອນ

*ກິດຈະກຳຮອບວຽນຂອງການຮຽນ ຖ້າເປັນໄປໄດ້ຄວນເຮັດຢູ່ໃນກຸ່ມໂຮງຮຽນ*



**ຄູສອງທ່ານຈັບຄູ່ກັນ ເພື່ອສະໜັບສະໜູນເຊິ່ງກັນ ແລະ ກັນ**

ການຈັບຄູ່ ຈະຊ່ວຍໃຫ້ທ່ານ:

- ສະໜັບສະໜູນເຊິ່ງກັນ ແລະ ກັນ
- ແບ່ງປັນປະສົບການການສອນທີ່ເຮັດໄດ້ດີ
- ແກ້ໄຂບັນຫາການສອນສະເພາະຮ່ວມກັນ

# ວິດີໂອສຳລັບການພັດທະນາຄູ

ຊ່ອງຢູທູບວິດີໂອສຳລັບການພັດທະນາຄູ ປະກອບມີຫຼາຍວິດີໂອ ລວມທັງມີຊຸດຟາຍສຽງຕ່າງໆ. ວິດີໂອເຫຼົ່ານີ້ ແມ່ນສາທິດວິທີການສອນຫຼັກໆ ທີ່ນຳໃຊ້ເຂົ້າໃນຫຼັກສູດສະບັບປັບປຸງໃໝ່, ເຕັກນິກການສອນແບບໃໝ່ ແລະ ສະແດງໃຫ້ເຫັນວິທີການຈັດຕັ້ງປະຕິບັດທີ່ມີປະສິດທິພາບ ເພື່ອນຳໃຊ້ເຂົ້າໃນການແກ້ໄຂບັນຫາການສອນທີ່ທ້າທາຍ. ວິດີໂອເຫຼົ່ານີ້ ແມ່ນນຳໃຊ້ຕົວຢ່າງທີ່ເກີດຂຶ້ນຈາກການສອນໃນຫ້ອງຮຽນຕົວຈິງໃນປະເທດລາວ. ຄູສາມາດນຳໃຊ້ວິດີໂອເຫຼົ່ານີ້ ເພື່ອເປັນເຄື່ອງມືຮຽນຮູ້ດ້ວຍຕົນເອງ ໃນການທວນຄືນ ແລະ ປັບປຸງຄວາມເຂົ້າໃຈຕໍ່ກັບວິທີການສອນແບບໃໝ່, ຮຽນຮູ້ການສອນທີ່ນຳໃຊ້ສຳລັບຫຼັກສູດໃໝ່ ຫຼື ນຳໃຊ້ເຂົ້າໃນການກະກຽມບົດສອນ. ຄູຝຶກ ແລະ ຜູ້ເຮັດວຽກສຶກສານິເທດຍັງສາມາດນຳໃຊ້ວິດີໂອເຫຼົ່ານີ້ໃນລະຫວ່າງການຝຶກອົບຮົມ, ການລົງຢ້ຽມຢາມໂຮງຮຽນ ຫຼື ກຸ່ມໂຮງຮຽນ. ສຳລັບຊຸດຟາຍການສອນສຽງປະກອບມີບົດເລື່ອງ, ດົນຕີ ແລະ ເພງ ເຊິ່ງຄູສາມາດນຳໃຊ້ໃນການສອນນັກຮຽນໃນຫ້ອງຮຽນໂດຍອີງຕາມແຕ່ລະບົດຮຽນທີ່ແຕກຕ່າງກັນ.

ທ່ານສາມາດເຂົ້າເຖິງວິດີໂອ ແລະ ຊຸດຟາຍສຽງເຫຼົ່ານີ້ ໂດຍການສະແກນຄິວອາໂຄດ.

ຫຼື ທ່ານສາມາດເຂົ້າເບິ່ງໃນຊ່ອງຢູທູບ "ວິດີໂອສຳລັບການພັດທະນາຄູ"

ວິດີໂອ ແລະ ຊຸດຟາຍສຽງເຫຼົ່ານີ້ ຈະບັນທຶກໃສ່ USB ເຊິ່ງຄູຈະໄດ້ຮັບພ້ອມກັບປຶ້ມຄູ່ມືຄູ.






# ຈະນຳໃຊ້ຊຸດຟາຍສຽງແນວໃດ?

ສື່ອຸປະກອນສຳລັບຫຼັກສູດຂັ້ນ ປ.5 ລວມມີຊຸດຟາຍສຽງ. ຊຸດຟາຍສຽງເຫຼົ່ານີ້ ແມ່ນສື່ອຸປະກອນທີ່ມີປະໂຫຍດ ເພື່ອສະໜັບສະໜູນຄູໃນການສອນເນື້ອໃນ ແລະ ທັກສະໃໝ່. ຊຸດຟາຍສຽງ ແມ່ນສ່ວນຫຼາຍມີຢູ່ໃນບົດຮຽນ ວິຊາພາສາອັງກິດ ແລະ ວິຊາພາສາລາວ.

ຊຸດຟາຍສຽງທັງໝົດແມ່ນໄດ້ບັນທຶກໃສ່ໃນ USB ເຊິ່ງຄູຈະໄດ້ຮັບພ້ອມກັບປຶ້ມຄູ່ມືຄູ. ນອກນີ້, ຍັງມີເອກະສານຄຳແນະນຳປະກອບໄປນຳ ຊຶ່ງມີລາຍລະອຽດຕ່າງໆຂອງຊຸດຟາຍສຽງຢູ່ໃນ USB.

ຊຸດຟາຍສຽງທັງໝົດແມ່ນສາມາດເຂົ້າເບິ່ງໄດ້ຢູ່ຊ່ອງຢູທູບ "ວິດີໂອສຳລັບການພັດທະນາຄູ"

ໃນຕົ້ນຂອງສົກຮຽນ ໃຫ້ຄູທຳຄວາມຄຸ້ນເຄີຍກັບຊຸດຟາຍສຽງເຫຼົ່ານີ້. ຖ້າຫາກວ່າທ່ານບໍ່ສາມາດເຂົ້າເຖິງຊຸດຟາຍສຽງເຫຼົ່ານີ້, ທ່ານສາມາດສອບຖາມຜູ້ອຳນວຍການ, ຜູ້ເຮັດວຽກສຶກສານິເທດ ຫຼື ຄູຝຶກຂັ້ນແຂວງຂອງທ່ານ.

ໃນເວລາທີ່ວາງແຜນການສອນໃຫ້ທ່ານເລືອກເອົາຟາຍສຽງທີ່ຕ້ອງການນຳໃຊ້. ສຳລັບວິຊາພາສາອັງກິດ, ຊຸດຟາຍສຽງໃນແຕ່ລະບົດຮຽນແມ່ນມີຢູ່ໃນຂັ້ນຕອນຕ່າງໆຂອງບົດຮຽນໃນປຶ້ມຄູ່ມືຄູ. ແຕ່ລະບົດຮຽນ ປະກອບມີຊຸດຟາຍສຽງພາສາອັງກິດທີ່ແປເປັນພາສາລາວມາແລ້ວ.




ທ່ານສາມາດເຂົ້າເບິ່ງຄຳແນະນຳຢູ່ໃນປຶ້ມຄູ່ມືຄູຂັ້ນ ປ.5 ກ່ຽວກັບການນຳໃຊ້ເພງ ແລະ ວິດີໂອ.

ທ່ານສາມາດຊອກຫາຟາຍສຽງຜ່ານຊ່ອງຢູທູບ/USB ແລະ ເປີດຟັງຟາຍສຽງເຫຼົ່ານັ້ນ ເພື່ອວາງແຜນການສອນຂອງທ່ານ. ກ່ອນເລີ່ມການສອນ, ທ່ານຕ້ອງແນ່ໃຈວ່າ ທ່ານມີລຳໂພງ/ໂທລະສັບມືຖືພ້ອມທີ່ຈະເປີດຟາຍສຽງເຫຼົ່ານັ້ນໃນເວລາທີ່ຕ້ອງການ.

ຖ້າຫາກວ່າທ່ານບໍ່ສາມາດເຂົ້າເຖິງຊຸດຟາຍສຽງເຫຼົ່ານີ້ໄດ້, ທ່ານສາມາດສອບຖາມຜູ້ອຳນວຍການ, ຜູ້ເຮັດວຽກສຶກສານິເທດ ຫຼື ຄູຝຶກຂັ້ນແຂວງຂອງທ່ານ



ຖ້າຫາກທ່ານເປີດຟາຍສຽງໂດຍການນຳໃຊ້ USB, ທ່ານຕ້ອງໄດ້ປະຕິບັດຕາມຂັ້ນຕອນລຸ່ມນີ້:

1. ສຽບ USB ເຂົ້າໃສ່ຄອມພິວເຕີ
2. ເປີດເຄື່ອງ
3. ເລືອກໃຊ້ຊ່ອງທາງ "USB"
4. ເລື່ອນຫາຟາຍສຽງທີ່ທ່ານຕ້ອງການ
5. ກົດເຂົ້າເພື່ອເປີດຟາຍສຽງດັ່ງກ່າວ

# ຈະນໍາໃຊ້ວິດີໂອແນວໃດ?

## 1

### ເລືອກວິດີໂອທີ່ຕ້ອງການຮັບຊົມ

**ເບິ່ງຫົວຂໍ້ວິດີໂອຕ່າງໆທີ່ມີໃນຊ່ອງຢູທູບ. ເລືອກວິດີໂອທີ່ທ່ານຄິດວ່າຈະຊ່ວຍໃນຂົງເຂດໃດໜຶ່ງຂອງການສອນ.**

ໃນການເລືອກເບິ່ງວິດີໂອ, ທ່ານຕ້ອງຄໍານຶງວ່າ:

> ຂົງເຂດການສອນໃດທີ່ທ້າທາຍທີ່ສຸດສໍາລັບທ່ານ?

> ທ່ານຢາກຮຽນຮູ້ຫຍັງເພີ່ມອີກບໍ່?

> ບັນຫາໃດທີ່ທ່ານອາດພົບພໍ້ໃນຫ້ອງຮຽນ?

## 2

### ກຽມພ້ອມຮັບຊົມ

**ອ່ານເນື້ອໃນຂອງວິດີໂອ ແລະ ກະກຽມສື່ການຮຽນການສອນທີ່ກ່ຽວຂ້ອງ ທີ່ທ່ານອາດຕ້ອງການ ເຊັ່ນ: ປຶ້ມຄູ່ມືຄູ, ປຶ້ມແບບຮຽນ, ສື່ການສອນ ແລະ ປຶ້ມບັນທຶກ.**

ສິ່ງທີ່ຄວນຄໍານຶງ ກ່ອນເບິ່ງວິດີໂອ:

> ທ່ານຮູ້ຫຍັງແດ່ແລ້ວ ກ່ຽວກັບຫົວຂໍ້ນີ້?

> ທ່ານຢາກຮຽນຮູ້ຫຍັງ?

## 6

### ການສະທ້ອນຄືນການສອນ

**ພາຍຫຼັງທ່ານໄດ້ທົດລອງນໍາໃຊ້ເຕັກນິກການສອນ/ ວິທີການ/ ການເຮັດກິດຈະກໍາ ໃຫ້ທ່ານສະທ້ອນຄືນໃນສິ່ງທີ່ທ່ານໄດ້ປະຕິບັດ. ເບິ່ງວິດີໂອຄືນຖ້າທ່ານຕ້ອງການ ແລະ ທົດລອງຫຼາຍໆຄັ້ງຈົນກວ່າທ່ານຈະມີຄວາມຊໍານານໃນເຕັກນິກ/ ວິທີການ/ ການເຮັດກິດຈະກໍາ.**

ບາງຈຸດທີ່ທ່ານອາດຈະສະທ້ອນຄືນ:

> ສິ່ງໃດທີ່ທ່ານເຮັດໄດ້ດີ?

> ທ່ານໄດ້ເຮັດຫຍັງທີ່ແຕກຕ່າງຈາກການສາທິດໃນວິດີໂອບໍ່?

> ທ່ານສາມາດສອນຫຍັງທີ່ແຕກຕ່າງເພື່ອປັບປຸງການສອນຂອງທ່ານໃນຄັ້ງຕໍ່ໄປ?




**ສາມາດເຂົ້າເບິ່ງວິດີໂອ ໂດຍການສະແກນຄິວອາໂຄດ**

## 3

### ຮັບຊົມວິດີໂອ

**ເບິ່ງວິດີໂອດ້ວຍຕົນເອງ ຫຼື ກັບຄູທ່ານອື່ນ, ຜູ້ອຳນວຍການ ຫຼື ຜູ້ເຮັດວຽກສຶກສານິເທດ.**

**ຢຸດການເບິ່ງ, ຍ້ອນຄືນເບິ່ງວິດີໂອ ແລະ ເບິ່ງວິດີໂອຄືນຫຼາຍໆຄັ້ງຕາມຄວາມຕ້ອງການ.**

ໃນຂະນະທີ່ກຳລັງເບິ່ງວິດີໂອ, ໃຫ້ສັງເກດ ແລະ ບັນທຶກສິ່ງຕໍ່ໄປນີ້:

> ມີຈຸດສຳຄັນຫຍັງແດ່ ທີ່ຄູໄດ້ເຮັດໃນວິດີໂອ?

> ນັກຮຽນມີການຕອບຮັບຄືແນວໃດ? (ຖ້າມີ)

## 4

### ການສະທ້ອນຄືນຕໍ່ກັບວິດີໂອ

**ໃຊ້ເວລາໜ້ອຍໜຶ່ງເພື່ອທົບທວນຄືນສິ່ງທີ່ໄດ້ເບິ່ງໃນວິດີໂອ ໂດຍອີງໃສ່ສິ່ງທີ່ທ່ານບັນທຶກ.**

ເພື່ອເປັນແນວທາງໃຫ້ທ່ານສະທ້ອນຄືນສິ່ງທີ່ໄດ້ເບິ່ງໃນວິດີໂອ, ໃຫ້ທ່ານຄຳນຶງສິ່ງຕໍ່ໄປນີ້:

> ໃນວິດີໂອ ສິ່ງໃດທີ່ຄູເຮັດແຕກຕ່າງກັບສິ່ງທີ່ທ່ານເຮັດ?

> ທ່ານຈະນຳໃຊ້ເຕັກນິກການສອນ/ ວິທີການ/ ການເຮັດກິດຈະກຳໃນຫ້ອງຮຽນຂອງທ່ານແນວໃດ?

## 5

### ນຳໃຊ້ສິ່ງທີ່ໄດ້ຮຽນ

**ຈັດສັນເວລາ ແລະ/ຫຼື ບົດຮຽນ ເພື່ອທົດລອງນຳໃຊ້ເຕັກນິກການສອນ/ ວິທີການ/ ການເຮັດກິດຈະກຳ.**

ຄຳນຶງກ່ຽວກັບຄຳຖາມລຸ່ມນີ້:

> ເມື່ອໃດທ່ານຈະລອງນຳໃຊ້ເຕັກນິກການສອນ/ ວິທີການ/ ການເຮັດກິດຈະກຳ?

> ທ່ານຢາກໃຫ້ຜູ້ເຮັດວຽກສຶກສານິເທດ/ ຜູ້ອຳນວຍການ ຫຼື ຄູທ່ານອື່ນສັງເກດການສອນຂອງທ່ານບໍ່?



# ວິດີໂອ ແລະ ພາຍສຽງໃດແດ່ທີ່ມີຢູ່ແລ້ວ?

## ວິຊາພາສາລາວ

ເຕັກນິກ ແລະ ສື່ການຮຽນການສອນ ສຳລັບວິຊາພາສາລາວ

- ຂັ້ນ ປ.1 ເຕັກນິກການຮຽນການສອນ (6 ວິດີໂອ): ເຕັກນິກ ທີ 1-3; ເຕັກນິກ ທີ 4-5; ເຕັກນິກ ທີ 6-7; ເຕັກນິກ ທີ 8-9; ເຕັກນິກ ທີ 10-12 ແລະ ເຕັກນິກ ທີ 15
- ການນຳໃຊ້ປຶ້ມອ່ານເສີມ (2 ວິດີໂອ): ພາກທີ 1 / ພາກທີ 2
- ຂັ້ນ ປ.2 ເຕັກນິກການຮຽນການສອນ (2 ວິດີໂອ): ເຕັກນິກ ທີ 13 A / ເຕັກນິກ ທີ 13 B



## ຄວາມຮູ້ຕໍ່ກັບລາຍວິຊາ

ເຕັກນິກ ແລະ ສື່ການຮຽນການສອນ ສຳລັບວິຊາອື່ນໆ

ວິດີໂອທີ່ມີຢູ່ແລ້ວ:

- ຂັ້ນ ປ.3 ການສອນສຽງ ວິຊາພາສາອັງກິດ
- ຂັ້ນ ປ.3 ສາທິດການສອນສຽງ ວິຊາພາສາອັງກິດ ທັງ 21 ສຽງ
- ຂັ້ນ ປ.4 ສາທິດການສອນສຽງ ວິຊາພາສາອັງກິດ ທັງ 21 ສຽງ



## ການຄຸ້ມຄອງຫ້ອງຮຽນ

ຍຸດທະສາດ ແລະ ວິທີການສອນທີ່ຈະຊ່ວຍໃຫ້ທ່ານສາມາດຈັດການ ການຮຽນການສອນ ແລະ ກິດຈະກຳຕ່າງໆກັບນັກຮຽນ

- ຈັດການຮຽນການສອນນອກຫ້ອງຮຽນ



## ການປະເມີນນັກຮຽນ

ເຕັກນິກ ແລະ ວິທີການປະເມີນນັກຮຽນຢ່າງມີປະສິດທິພາບ

ວິດີໂອທີ່ມີຢູ່ແລ້ວ:

- ການປະເມີນຜົນການຮຽນແບບຮອບດ້ານ
- ເຕັກນິກການສັງເກດເພື່ອປະເມີນຜົນການຮຽນ
- ເຕັກນິກການປະເມີນຜົນການຮຽນໂດຍການຕັ້ງຄຳຖາມ
- ການໃຫ້ຄວາມຊ່ວຍເຫຼືອໃນລະຫວ່າງ ການປະເມີນ ແລະ ພາຍຫຼັງການປະເມີນ



## ການພັດທະນາວິຊາຊີບຄູ

ກິດຈະກຳການຮຽນຮູ້ແບບເພື່ອນຊ່ວຍເພື່ອນ ແລະ ການຮຽນຮູ້ດ້ວຍຕົນເອງ ເພື່ອການພັດທະນາວິຊາຊີບຄູແບບຕໍ່ເນື່ອງ.

> ການສັງເກດການສອນໃນຫ້ອງຮຽນ ແລະ ການໃຫ້ຄຳເຫັນ

> ວິທີການຮຽນການສອນແບບໃໝ່ ສຳລັບຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່

> ການຈັດຕັ້ງ ແລະ ການດຳເນີນກິດຈະກຳເປັນຄູ່/ເປັນກຸ່ມ (ຈະມີໃນໄວໆນີ້)

> ຮອບວຽນຂອງການຮຽນ (ຈະມີໃນໄວໆນີ້)

> ລະບົບພູກສ່ຽວ (ຈະມີໃນໄວໆນີ້)





## ການສຶກສາຮຽນຮ່ວມ

ກິດຈະກຳ ແລະ ວິທີການສອນຕ່າງໆ ເພື່ອຮັບປະກັນໃຫ້ນັກຮຽນທຸກຄົນມີໂອກາດເທົ່າທຽມກັນໃນການມີສ່ວນຮ່ວມ ແລະ ການຮຽນຮູ້.

> ການຊ່ວຍເຫຼືອນັກຮຽນຊົນເຜົ່າ



## ການຄຸ້ມຄອງສື່ການຮຽນການສອນ

ການນຳໃຊ້ ແລະ ການເກັບຮັກສາສື່ການຮຽນການສອນຕ່າງໆໃນຫ້ອງຮຽນ.

> ການປະດິດ ແລະ ການນຳໃຊ້ບັດຄຳ ແລະ ບັດຮູບພາບ




## ຊຸດຟາຍສຽງ

ບົດເລື່ອງ, ເພງ ແລະ ດົນຕີ ເພື່ອນຳໃຊ້ເຂົ້າໃນການສອນໃນຫ້ອງຮຽນສຳລັບຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່.

ຊຸດຟາຍສຽງທີ່ມີສຳລັບວິຊາລຸ່ມນີ້:

> ຊັ້ນ ປ.1 ອາທິດແນະນຳເບື້ອງຕົ້ນ, ວິຊາພາສາລາວ, ວິຊາດົນຕີ ແລະ ວິຊາພະລະສຶກສາ

> ຊັ້ນ ປ.2 ວິຊາພາສາລາວ, ວິຊາດົນຕີ ແລະ ວິຊາພະລະສຶກສາ

> ຊັ້ນ ປ.3 ວິຊາພາສາລາວ ແລະ ວິຊາພາສາອັງກິດ

> ຊັ້ນ ປ.4 ວິຊາພາສາອັງກິດ




ວິດີໂອ ແລະ ຟາຍສຽງໃໝ່ ແມ່ນໄດ້ມີການຜະລິດເປັນປົກກະຕິ, ສະນັ້ນທ່ານສາມາດເຂົ້າເບິ່ງຜ່ານຊ່ອງຢູທູບຕື່ມ “ວິດີໂອສຳລັບການພັດທະນາຄູ/Teacher Development Videos” ຫຼື ທ່ານສາມາດສະໝັກດ້ວຍການກົດ “subscribe” ເພື່ອຮັບຂໍ້ຄວາມເຕືອນເມື່ອມີເນື້ອໃນໃໝ່ຖືກອັບໂຫຼດຕື່ມໃນຊ່ອງດັ່ງກ່າວ.

# 8 ຄຳແນະນຳ ສຳລັບຄູໃນການກຽມຄວາມພ້ອມສຳລັບການສອນໃນສົກຮຽນໃໝ່

ອ່ານ ແລະ ທຳຄວາມເຂົ້າໃຈສື່ອຸປະກອນການຝຶກອົບຮົມຕ່າງໆ, ປຶ້ມຄູ່ມືຄູ ແລະ ປຶ້ມແບບຮຽນກ່ອນເປີດສົກຮຽນ

ຕົບແຕ່ງຫ້ອງຮຽນໂດຍການນຳໃຊ້ໂປສະເຕີ ແລະ ເພີ່ມສີສັນໃນຫ້ອງຮຽນ ເພື່ອເຮັດໃຫ້ມີຄວາມໜ້າສົນໃຈ ແລະ ສ້າງຄວາມດຶງດູດ

ກະກຽມປຶ້ມບັນທຶກເພື່ອເກັບກຳຄະແນນການປະເມີນແບບຮູບທຳ

ນຳໃຊ້ປຶ້ມຄູ່ມືຄູ ແລະ ປຶ້ມແບບຮຽນ ເພື່ອວາງແຜນການສອນ

ເບິ່ງວິດີໂອການຝຶກອົບຮົມຄູ ເພື່ອປັບປຸງເຕັກນິກການສອນຂອງທ່ານເອງ

ກວດຄືນສື່ການຮຽນການສອນທີ່ມີຢູ່ແລ້ວໃນໂຮງຮຽນ ແລະ ເບິ່ງວ່າມີສື່ການຮຽນການສອນອັນໃດແດ່ທີ່ທ່ານສາມາດສ້າງເອງໄດ້

ຈັດສັນຫ້ອງຮຽນທີ່ອຳນວຍຄວາມສະດວກໃນການເຮັດກິດຈະກຳເປັນກຸ່ມ

ຈຳແນກວ່າວິຊາໃດຕ້ອງການຟາຍສຽງ ແລະ ຝຶກຊ້ອມຢູ່ໃນ YouTube ຫຼື USB ທີ່ທ່ານໄດ້ຮັບ



Australian Aid

ແຜນງານບີຄວາແມ່ນແຜນງານທີ່ນຳພາໂດຍລັດຖະບານແຫ່ງ ສປປ ລາວ ໂດຍການສະໜັບສະໜູນຈາກລັດຖະບານອົດສະຕຣາລີ

ຈັດພິມໃນເດືອນ ພຶດສະພາ ປີ 2023